# ຜະຫຍາຍ່ອຍ

ຮິບໂຮມໂດຍ : ມະຫາ ບຸນຍົກ ແສນສຸນທອນ



204/ ...

໒໐

ໂຄງການ
ປົກປັກຮັກສາ
ໜັງສືໃບລານລາວ
*ການຮ່ວມມື ລາວ-ເຢຍຣະມັນ*

# ຜະຫຍາຍ່ອຍ


ຮິບໂຮມໂດຍ

***ມະຫາ ບຸນຍົກ ແສນສຸນທອນ***



ຈັດພິມໂດຍ

**ໂຄງການປົກປັກຮັກສາໜັງສືໃບລານລາວ**

**ການຮ່ວມມື ລາວ-ເຢຍຣະມັນ**

2000

# ຜະຫຍາຍ່ອຍ

ຮິບໂຮມໂດຍ

***ມະຫາບຸນຍົກ ແສນສຸນທອນ***

© ***ສະຫງວນ ລິຂະສິດ***

ບັນນາທິການ-ພິສູດອັກສອນ : *ດາລາ ກັບລະຍາ*

ອອກແບບໜ້າປົກ-ຄອມພິວເຕີ : *ຄຳມັກ ວົງສັກດາ*

ພິມທີ່ ວິສະຫະກິດການພິມ ກະຊວງສຶກສາ

ຕາມ ທບ 25/ພທປ 020496

ພິມຄັ້ງທີນຶ່ງ ປີ 1996 ຈຳນວນ 2.000 ຫົວ

ພິມຄັ້ງທີສອງ ກໍຣະກົດ 2000 ຈຳນວນ 3.000 ຫົວ

***ໂຄງການປົກປັກຮັກສາໜັງສືໃບລານລາວ***

*ຫໍສະໝຸດແຫ່ງຊາດ*

*ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ*

*ຖະໜົນເຊດຖາທິລາດ (ນ້ຳພຸ) ວຽງຈັນ*

# ສ າ ລ ະ ບ າ ນ

1. ຜະຫຍາຍ່ອຍ ........................................ 1

2. ຄໍາອ່ານກອນສານ ........................................ 29

3. ສານໄກ່ແກ້ວ ........................................ 44

# ຄຳນຳ

## ( ໃນການພິມຄັ້ງທີສອງ )

ປຶ້ມຜະຫຍາຍ່ອຍ ທີ່ທ່ານອາຈານມະຫາບຸນຍົກ ແສນສຸນທອນ ໄດ້ຮິບໂຮມ ກອດຈາກລານກ້ອມໃນວັດຕ່າງໆ ຢູ່ຫລວງພະບາງ ແລະ ພິມແຈກຢາຍໄປໃນຊຸດທີນຶ່ງ ຈຳນວນ 2.000 ຫົວ ມາຮອດປັດຈຸບັນ ທາງໂຄງການເຫັນວ່າມີຜູ້ນິຍົມຊົມຊອບ ໃຊ້ອ່ານປະກອບຄວາມຮູ້ ແລະ ສະຕິປັນຍາ ບາງໂອກາດເວລາ ກໍນຳເອົາຄຳຜະຫຍາຍ່ອຍເຫລົ່ານີ້ ມາສັ່ງສອນ ເປັນຄະຕິເຕືອນໃຈໃຫ້ແກ່ລູກຫລານໄວໜຸ່ມໄວຣຽນ ແລະ ອະນຸຊົນ ບາງຄົນຍັງນຳໄປເປັນບົດຮຽນໃນການແຕ່ງກາບກອນ ແລະ ບົດສອນ ບົດອັບບົດລຳ ບຳອື່ກ ຈຶ່ງໄດ້ຈັດພິມເປັນເທື່ອທີສອງ ດ້ວຍຈຳນວນ 3.000 ຫົວຕື່ມ ເພື່ອໄວ້ແຈກຢາຍ ແລະ ເຜີຍແຜ່ວັນນະກຳຂອງຊາດ ໃນໂອກາດທີ່ໜ່ວຍສຳຫລວດ ແລະ ປົກປັກຮັກສາໜັງສືໃບລານ ລົງເຄື່ອນໄຫວຕາມທ້ອງກິ່ນຕ່າງໆ.

ການຈັດພິມໃນເທື່ອນີ້ ກໍບໍ່ໄດ້ເພີ່ມເຕີມ ຫລືດັດແປງຂໍ້ຄວາມໃດໆ ພຽງແຕ່ຈັດຮູບເຫລັ້ມ ແລະ ສີສັນຕື່ມ ຊຶ່ງຮູບທັງໝົດກໍໄດ້ມາຈາກພາບຊີວິດຂອງຊາວບ້ານຊາວເມືອງ ທີ່ທາງໂຄງການ

ໄດ້ລົງໄປຢ້ຽມຢາມ ແລະ ຮ່ວມວຽກງານປົກປັກຮັກສາໜັງສື ໃບລານມາແລ້ວ.

ໂຄງການປົກປັກຮັກສາໜັງສືໃບລານລາວ ຂໍຖືໂອກາດນີ້ ສະແດງຄວາມຂອບໃຈມາຍັງ ທ່ານອາຈານບຸນຍົກ ແສນສຸນທອນ ທີ່ປຶກສາວິຊາການ ທີ່ໄດ້ມີຄວາມອຸດສາຫະວິຣິຍະ ກ່າຍທອດ ເນື້ອໃນອັນມີສາຣະເຫລົ່ານີ້ ມາສູ່ລູກຫລານອ່ານ.

ຂໍຂອບໃຈທີມງານສຳຫລວດ ທີ່ໄດ້ບັນທຶກພາບຈາກຫ້ອງກຸ່ມ ຕ່າງໆ ມາເປັນທີ່ລະລຶກອັນຈັບໃຈ. ຫວັງວ່າທ່ານຜູ້ອ່ານ ທີ່ໄດ້ ນຳໃຊ້ປື້ມເຫລັ້ມນີ້ ຈະໄດ້ຮັບຄວາມບັນເທີງ ແລະ ສາລະດ້ານ ພາສາວັນນະຄະດີອັນຍອດຍິ່ງ ຂອງຊາດລາວເຮົາ.

ວຽງຈັນ, ວັນທີ 27 ກໍລະກົດ 2000

ຫົວໜ້າໂຄງການ

***ກົງເດືອນ ເນດຕະວົງ***

# ຄຳນຳ

( ໃນການພິມຄັ້ງທີນຶ່ງ )

ດ້ວຍຄວາມອຸດສາຫະພາກພຽນ ທ້ອນໂຮມບ່ອນລະເລັກລະນ້ອຍ ຂອງທ່ານມະຫາບຸນຍົກ ແສນສຸນທອນ ທີ່ປຶກສາວິຊາການ ຂອງໂຄງການປົກປັກຮັກສາໜັງສືໃບລານລາວ ທາງໂຄງການໄດ້ນຳມາຈັດພິມເປັນປຶ້ມສຳລັບຜູ້ອ່ານທົ່ວໄປ ທັງທີ່ເປັນນັກຮຽນຮູ້ ປັນຍາຊົນ ທີ່ສົນໃຈໃນກາບກອນ ສຸພາສິດບູຮານ ອັນທີ່ບຸພພາຈານລາວເຮົາ ໄດ້ຄິດຄົ້ນຈານລົງໃນໃບລານ ເປັນເວລາເຫິງນານມາແລ້ວ. ເນື້ອໃນ ແລະ ຄະຕິຄຳສອນ ເຖິງຈະບໍ່ເປັນເລື່ອງສືບຕໍ່ ເປັນນິທານຄົບຊຸດ ແຕ່ກໍຖືວ່າເປັນປຣັຊຍາ ແລະ ຄະຕິທັມໃຫ້ເຮົາຮູ້ໄດ້ວ່າ ພູມປັນຍາຂອງຄົນຮຸ່ນປູ່ຍ່າຕາທວດຂອງພວກເຮົາ ເພິ່ນຊ່າງເວົ້າ ຊ່າງສອນ ໂດຍທີ່ເຮັດໃຫ້ເປັນກາບກອນ ຄະຕິທັມ ສາມາດນຳມາເປັນແບບຢ່າງອັນດີໃນຍຸກປັດຈຸບັນ ແລະ ໃຫ້ແນວ ຄວາມຄິດແກ່ນັກປະດິດຄິດແຕ່ງໄດ້ດີສົມຄວນ.

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມືລາວ-ເຢຍຣະມັນ ກະຊວງກະແຫລງຂ່າວ ແລະ ວັດທະນະທຳ

ຈຶ່ງເຫັນດີຈັດພິມປຶ້ມ **ຜະຫຍາຍ່ອຍ** ນີ້ຂຶ້ນ ຈຳນວນ 2.000 ຫົວ ເພື່ອເປັນການປະກອບສ່ວນ ຊຸກຍູ້ວຽກງານການຄົ້ນຄວ້າສຶກສາ ສິລປະວັນນະຄະດີຊາດຂອງພວກເຮົາ.

ໂຄງການປົກປັກຮັກສາຫນັງສືໃບລານລາວ ຂໍຂອບໃຈ ທ່ານ ມະຫາບຸນຍົກ ແສນສຸນທອນ ໃນການລິຈະນາ ຮຽບຮຽງ ຄຳຜະຫຍາຊຸດນີ້ ແລະ ຫວັງວ່າ ຜົນສຳເລັດອັນນີ້ ຄົງເປັນ ປະໂຫຍດແກ່ບັນດາທ່ານ ທີ່ໃຫ້ຄວາມສົນໃຈ ແລະ ນຳໃຊ້ຕາມ ຄວາມສາມາດຂອງແຕ່ລະບຸກຄົນ.

ວຽງຈັນ, ວັນທີ 20 ມີນາ 1996

ຫົວຫນ້າ ໂຄງການປົກປັກຮັກສາຫນັງສືໃບລານລາວ

*ດາຣາ ກັນລະຍາ*

# ລານກ້ອມ ກ່ອມພະຫຍາ

ດ້ວຍຄວາມມັກ ແລະ ຝັກໃຝ່ໃນທາງວັນນະຄະດີຊາດ ສົມທົບກັບວິຊາສະເພາະ ທີ່ຂ້າພະເຈົ້າໄດ້ອຸທິຕົນ ໃຊ້ຊີວິດໃນທາງການສຶກສາ ແລະສິດສອນໂຮງຮຽນປະລິຍັດຕິທັມ ກໍຄືໂຮງຮຽນປາລີສິງ ເປັນຊີວິດຈິດໃຈ ນັບແຕ່ໄດ້ສຳເລັດການສຶກສາ ທາງດ້ານພຸດທະສາສະໜາ ມາເປັນເວລາເກືອບຮອດ ໔໐ ປີ.

ເມື່ອໄດ້ມາຊ່ວຍເປັນທີ່ປຶກສາ ໂຄງການປົກປັກຮັກສາໜັງສືມໍລະດົກທາງພູມປັນຍາຂອງຄົນບູຮານ ກໍຄື ຄຳພີໃບລານລາວໃນປັດຈຸບັນ ເຮັດໃຫ້ຂ້າພະເຈົ້າໄດ້ມີໂອກາດຮ່ຳຮຽນ ແລະ ໃຊ້ເວລາຫວ່າງໃນຍາມລົງສຳຫລວດກວດກາຂຶ້ນບັນຊີໃບລານ ແລະ ເຮັດການທ້ອນໂຮມປົກປັກຮັກສາ ໃນຂອບເຂດຫລາຍແຂວງ ຫລາຍທ້ອງຖິ່ນ ມາໄດ້ ໔-໕ ປີແລ້ວ ເຫັນວ່າຄຳພີໃບລານ ແລະ ເອກະສານບູຮານຕ່າງໆ ແມ່ນເປັນມູນມໍລະດົກອັນລ້ຳຄ່າທາລາຄາບໍ່ໄດ້ (ບໍ່ສາມາດຕີລາຄາ) ໃນນັ້ນ ບໍ່ແມ່ນສະເພາະພະທັມຄຳສັ່ງສອນ ທາງພຸດທະສາສະໜາຢ່າງດຽວ ມັນສ່ອງແສງເຖິງຊີວິດສັງຄົມ. ການດຳລົງຊີວິດ ແລະ ວັດທະນະທຳ

ປະເພນີຮີດຄອງອັນດີງາມ ໄດ້ກືກຈາລຶກ (ຈານ) ລົງໃນໃບລານ ເຊິ່ງເມື່ອທຽບໃສ່ວິທະຍາການໃນສະໄຫມປັດຈຸບັນ ມີເກືອງ ໑໘ ສາດ ຫລືສາຂາ, ລ້ວນແຕ່ແມ່ນສິລະປະ ວິທະຍາການທີ່ຍັງ ນຳມາປະຍຸກ ດັດແປງໃຫ້ໃຊ້ໄດ້ທຸກໂອກາດ ແລະ ເວລາ ຫາກວ່າຈະມີການປ່ຽນແປງ ກໍແມ່ນພຽງຄຳເວົ້າ ຫລືຄຳສັບ ທີ່ສະໄຫມນີ້ເອີ້ນວ່າ ເຕັກໂນໂລຊີເທົ່ານັ້ນ.

ໂດຍສະເພາະດ້ານວັນນະກຳ ກໍຄື ດ້ານການຂຽນກາບ ກອນ ໂຄງສານຕ່າງໆ ກືວ່າເປັນວັນນະຄະດີ ແລະ ປຣັຊ ຍາອັນແຫລມຄົມ ແລະ ຄວນທີ່ລູກຫລານຜູ້ເປັນອະນຸຊົນ ຮູ້ຈັກ ຄົ້ນຄວ້າ ແລະ ສືບທອດຫລັກການ ວິທີວິທະຍາໃນການແຕ່ງ ການຂຽນ ແລະ ສາມາດຕີຄວາມຫມາຍໃຫ້ທັນຍຸກ ທັນສະ ໄຫມໄດ້.

ປື້ມ " ຜະຫຍາຍ່ອຍ " ຫົວນ້ອຍໆນີ້ ເປັນພຽງແຕ່ນຶ່ງ ສ່ວນພັນ ຂອງປະເພດກາບກອນ ສຸພາສິດ ປຣັຊຍາ ທີ່ຄົນບູຮານ ເພິ່ນໄດ້ຂຽນ ໄດ້ຈານ ລົງໃສ່ໃບລານໄວ້, ຂ້າພະເຈົ້າ ກໍພຽງແຕ່ ໄດ້ເຫັນໄດ້ອ່ານ ແລະ ໃຊ້ເວລາຫວ່າງຈາກວຽກໂອ້ລົມ ຊີ້ນຳ ລູກຫນ່ວຍ ທີ່ເຮັດການສຳຫລວດ ແລ້ວມາຂຽນໄວ້ ໄດ້ຈາກ ບ່ອນນັ້ນແດ່ ບ່ອນນີ້ແດ່ ບາງເທື່ອກໍເຫັນໃບນຶ່ງສອງໃບ ໂດຍ

# ຂໍໂທດຫຼາຍໆ



ປຶ້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ

ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່

ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່

ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ